## 1. ປະຫວັດຄວາມເປັນມາ

ສາຂາ ທະນາຄານແຫ່ງ ສປປ ລາວ ພາກໃຕ້ ແຂວງ ຈຳປາສັກ ໄດ້ສ້າງຕັ້ງຂຶ້ນ ໃນວັນທີ 19 ມີນາ 1999, ຊຶ່ງໄດ້ມີການປັບປຸງປ່ຽນແປງການຈັດຕັ້ງຕາມແຕ່ລະໄລຍະ, ຕະຫລອດໄລຍະ 25 ປີຜ່ານມາ ສາຂາ ທຫລ ພຕ ໄດ້ຜ່ານຜ່າຄວາມຫຍຸ້ງຍາກ, ເສຍສະລະ, ສຳເລັດໜ້າທີ່ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຢູ່ໃນທ້ອງຖິ່ນຢ່າງຕັ້ງໜ້າ. ໂດຍເລີ່ມແຕ່ປີ 1999 ຫາປີ 2002,  ໃນເວລານັ້ນສາຂາ ທຫລ ພຕ ເປັນສຳນັກງານຕົວແທນແຫ່ງທຳອິດຂອງທະນາຄານແຫ່ງ ສປປ ລາວ, ຊຶ່ງປະກອບມີພຽງຫົວໜ້າສຳນັກງານ 1 ທ່ານ ແລະ 4 ໜ່ວຍງານ ຄື: ໜ່ວຍງານບໍລິການ-ບັນຊີ, ໜ່ວຍງານຄັງສາງ-ຄັງເງິນສົດ, ໜ່ວຍງານຫ້ອງການ-ຄຸ້ມຄອງ ແລະ ໜ່ວຍງານກວດກາພາຍໃນ, ມີພະນັກງານທັງໝົດ 8 ທ່ານ, ຍິງ 3 ທ່ານ, ມີທີ່ຕັ້ງສຳນັກງານຢູ່ບ້ານ ທ່າຫຼວງ, ເມືອງ ປາກເຊ, ແຂວງ ຈຳປາສັກ, ຕຶກຊັ້ນທີ 3 (ທະນາຄານພັດທະນາລາວ ສາຂາ ປາກເຊ ໃນປັດຈຸບັນ). ໃນເດືອນ ເມສາ ປີ 2002 ກໍ່ໄດ້ມີການປັບປຸງການຈັດຕັ້ງ ຈາກໜ່ວຍຕົວແທນມາເປັນ ໜ່ວຍບໍລິການທະນາຄານແຫ່ງ ສປປ ລາວ ພາກໃຕ້, ຕາມຂໍ້ກຳນົດ ເລກທີ 57/ທຫລ, ລົງວັນທີ 06 ມີນາ 2002, ໂດຍໄດ້ເລີ່ມບໍລິການດ້ານການເງິນ-ເງິນຕາ ໃຫ້ແກ່ທະນາຄານທຸລະກິດ ແລະ ສະຖາບັນການເງິນ, ສະໜອງເງິນສົດ, ງົບປະມານແຫ່ງລັດ ໃຫ້ແກ່ 04 ແຂວງພາກໃຕ້ ຢ່າງເປັນທາງການ, ຊຶ່ງຍັງມີພຽງຫົວໜ້າ 1 ທ່ານ, ແຕ່ເພີ່ມຂຶ້ນອີກ 1 ໜ່ວຍງານ ເປັນ 5 ໜ່ວຍງານ ( ໜ່ວຍງານຄຸ້ມຄອງທະນາຄານທຸລະກິດ-ສະຖາບັນການເງິນ), ມີພະນັກງານທັງໝົດ 22 ທ່ານ, ຍິງ 8 ທ່ານ, ພ້ອມທັງ ໄດ້ຍົກຍ້າຍສຳນັກງານໄປຢູ່ບ້ານສວນສະຫວັນ, ເມືອງປາກເຊ, ແຂວງ ຈຳປາສັກ ( ຫຼັກ 4, ຂ້າງສະໂມສອນໃຫຍ່). ຕໍ່ມາໃນເດືອນ ມີນາ ປີ 2005 ກໍ່ໄດ້ຍົກລະດັບຈາກໜ່ວຍບໍລິການມາເປັນທະນາຄານແຫ່ງ ສປປ ລາວ ພາກໃຕ້, ຕາມຂໍ້ຕົກລົງ ສະບັບເລກທີ 05/ທຫລ, ລົງວັນທີ 25 ມີນາ 2005, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວສາຂາ ທະນາຄານແຫ່ງ ສປປ ລາວ ພາກໃຕ້. ປະກອບມີຫົວໜ້າ 1 ທ່ານ, ມີຮອງ 1 ທ່ານ ແລະ ປ່ຽນຈາກໜ່ວຍງານເປັນພະແນກ, ມີ 6 ພະແນກ (ເພີ່ມຕື່ມພະແນກເສດຖະກິດເງິນຕາ-ຄຸ້ມຄອງເງິນຕາຕ່າງປະເທດ), ຊຶ່ງມີພະນັກງານທັງໝົດ 39 ທ່ານ, ຍິງ 14 ທ່ານ, ມີຖານະທຽບເທົ່າກົມໜຶ່ງຂອງ ທຫລ ແລະ ຍົກຍ້າຍສຳນັກງານມາຕັ້ງຢູ່ບ້ານຫລັກເມືອງ, ນະຄອນປາກເຊ, ແຂວງ ຈຳປາສັກ ( ພະແນກແຜນການ ແລະ ລົງທຶນແຂວງຈຳປາສັກ ຫລັງເກົ່າ).

ມາຮອດເດືອນ ພຶດສະພາ ປີ 2008 ເພື່ອເຮັດໃຫ້ການປະຕິບັດວຽກງານການເຄື່ອນໄຫວຂອງສາຂາ ທະນາຄານແຫ່ງ ສປປ ລາວ ພາກໃຕ້ ໄດ້ມີຄວາມເຂັ້ມແຂງ ຕາມການພັດທະນາເສດຖະກິດ-ສັງຄົມ ຢູ່ທ້ອງຖິ່ນ ຈຶ່ງໄດ້ມີການປັບປຸງການຈັດຕັ້ງຂອງສາຂາ ທະນາຄານແຫ່ງ ສປປ ລາວ ພາກໃຕ້ ຄັ້ງວັນທີ 13/05/2008, ຊຶ່ງປະກອບມີຫົວໜ້າ 1 ທ່ານ, ຮອງ 3 ທ່ານ ແລະ 7 ພະແນກ (ເພີ່ມຕື່ມພະແນກຄຸ້ມຄອງສະຖາບັນການເງິນຈຸລະພາກ),  ຊຶ່ງມີພະນັກງານທັງໝົດ 75 ທ່ານ, ຍິງ 38 ທ່ານ. ທີ່ຕັ້ງຢູ່ຖະໜົນແຄມຂອງ, ບ້ານຫຼັກເມືອງ, ນະຄອນປາກເຊ, ແຂວງ ຈຳປາສັກ. ມາຮອດທ້າຍປີ 2023 ໄດ້ມີການປັບປຸງພາລະບົດບາດຂອງ ທຫລ ພຕ ຕື່ມອີກ ແລະ ມີການປັບປຸງຈັດວາງພະນັກງານຄືນໃໝ່ໃຫ້ສອດຄ່ອງກັບສະພາບໃນປະຈຸບັນ ຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສາຂາ ທະນາຄານແຫ່ງ ສປປ ລາວ ປະຈຳພາກ ສະບັບເລກທີ 1032/ທຫລ, ຄັ້ງວັນທີ 20 ຕຸລາ 2023, ຊຶ່ງໃນພາລະບົດບາດໃໝ່ນີ້ມີໂຄງປະກອບກົງຈັກມີ 6 ພະແນກ ແລະ ມີໂຄງປະກອບບຸກຄະລາກອນ ມີ ຫົວໜ້າສາຂາ 1 ທ່ານ ແລະ ຮອງສາຂາ 3 ທ່ານ, ມີພະນັກງານທັງໝົດ 75 ທ່ານ, ຍິງ 38, ຊາຍ 47 ທ່ານ.

**ນັບແຕ່ມື້ສ້າງຕັ້ງມາຮອດປະຈຸບັນ ມີຫົວໜ້າສາຂາ 5 ທ່ານ ດັ່ງນີ້:**

# ຫົວໜ້າສາຂາ ທະນາຄານແຫ່ງ ສປປ ລາວ ພາກໃຕ້ ແຕ່ອາດີດເຖິງປັດຈຸບັນ



ທ່ານ ຄຳໝັ້ນ ພັນທະລາ ຫົວໜ້າສາຂາ

ປີ 1999 - 2010



ທ່ານ ມະ ຈັນຕະລິວົງ ຫົວໜ້າສາຂາ

ປີ 2010 - 2016



ທ່ານ ວຽງສະຫວັນ ໄຊຍະວົງ ຮັກສາການຫົວໜ້າສາຂາ

ປີ 2016 - 2018



ທ່ານ ນວນຕາ ແກ້ວມະນີ ຫົວໜ້າສາຂາ

ປີ 2018 - 2024



ທ່ານ ໄຊລື້ຊາ ຜຸຍຍະວົງ ຫົວໜ້າສາຂາ

ປີ 2024 - ປັດຈຸບັນ